ຂ່າວພາຍໃນ
*Internal Newsletter*
ມິດຕະພາບ ລາວ - ຍີ່ປຸ່ນ
*Friendship for Laos and Japan*
No. 05- 28/03/2013

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມເຄຫາ ແລະ ຜັງເມືອງ
ໂຄງການ ພັດທະນາ ຄວາມອາດສາມາດ ດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນ້ຳປະປາ
The Capacity Development Project for Improvement of Management Ability of Water Supply Authorities

# Data management improvement started



Mini (follow-up) workshops on data management were held in the 3 pilot WSSEs on 10/01 in Khammouane, on 14/01 in Luang Prabang and on 24/01 in Vientiane Capital respectively. Including data items raised in the data management workshop on 30/11, the JICA expert team reviewed and added more data items, totaling 276 items for a data list to be used for **Summary Annual Report** and **Long-, Mid- and Short-term Plans**, followed by **Performance Indicators (PI)** and **Key Performance Indicators (KPI: SPT&SL)**. Short-term experts came to your WSSEs to work together to confirm availability of the data items in the follwing ways: if your WSSE has the proposed data items, accuracy of data collection methods will be reviewed; if your WSSE does not have the data items, how to collect data will be discussed. Then, your WSSE will summarize improved data collection methods for accuracy and new data items in your WSSE's Data Management Improvement Plan.

The listed 276 data items can be categorized into 9 groups, which will be an outline of **Summary Annual Report**. These 9 categories are (numbers in parentheses are number of data items):

1. Overview (1)
2. Organizations (32)
3. Water Supply Infrastructure (140)
4. Water Supply (32)
5. Non Revenue Water (NRW) (9)
6. Customer Service (12)
7. Finance (38)
8. Water Quality (5)
9. Others (contact information) (7)

Our immediate goals are to make and implement Data Management Improvement Plan, and make **Summary Annual Report** based on the data collected. The data and **Summary Annual Report** will be used for (1) Annual Report for DPWT and (2) Report for WASRO through extraction, and (3) **Long-, Mid- and Short-term Plans** through analysis. Extraction and analytical methods will later be proposed by the JICA expert team.
















ຂ່າວພາຍໃນ
*Internal Newsletter*
ມິດຕະພາບ ລາວ - ຍີ່ປຸ່ນ
*Friendship for Laos and Japan*
No. 05- 28/03/2013

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມເຄຫາ ແລະ ຜັງເມືອງ
ໂຄງການ ພັດທະນາ ຄວາມອາດສາມາດ
ດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນ້ຳປະປາ
The Capacity Development Project for Improvement of Management Ability of Water Supply Authorities

# ການປັບປຸງການຄຸ້ມຄອງຂໍ້ມູນໄດ້ເລີ່ມຂຶ້ນ



(ຕໍ່)ການປຶກສາຫາລືຂະໜາດນ້ອຍກ່ຽວກັບການຄຸ້ມຄອງຂໍ້ມູນໄດ້ຈັດຂຶ້ນໃນ3ໂຄງການຕົວແບບທີ່ແຂວງຄຳມ່ວນໃນວັນທີ10/1/2013, ທີ່ແຂວງຫລວງພະບາງໃນວັນທີ14/1/2013ແລະທີ່ນະຄອນຫລວງວຽງຈັນໃນວັນທີ24/1/2013. ໂດຍລວມເອົາລາຍການຂໍ້ມູນທີ່ໄດ້ຮັບຈາກການສຳມະນາຄັ້ງກ່ອນໃນວັນທີ30/11/2012, ທີມງານຊ່ຽວຊານໄຈກາໄດ້ຄັດເລືອກແລະສະເໜີເອົາ276ລາຍການຂໍ້ມູນສຳລັບບົດລາຍງານປະຈຳປີແລະແຜນການໄລຍະສັ້ນ,ແຜນການໄລຍະກາງ ແລະ ແຜນການໄລຍະຍາວ, ຕົວຊີ້ວັດໃນການປະຕິບັດ(PI) ແລະ ຕົວຊີ້ວັດຫລັກໃນການປະຕິບັດ(KPI/SPT&SL). ໃນເດືອນແລ້ວນີ້ຊ່ຽວຊານໄລຍະສັ້ນທີ່ນ້ຳປະປາໄດ້ກວດກາຄວາມພ້ອມຂອງລາຍການຂໍ້ມູນ:ຖ້າຫາກວ່າລັດວິສາຫະກິດນ້ຳປະປາຂອງທ່ານມີຂໍ້ສະເໜີລາຍການຂໍ້ມູນ,ມີວິທີການເກັບກຳຂໍ້ມູນທີ່ຖືກຕ້ອງກໍຈະໄດ້ຮັບການທົບທວນຄືນ;ແຕ່ຫາກວ່າ ລັດວິສາຫະກິດນ້ຳປະປາຂອງທ່ານ ບໍ່ມີລາຍການຂໍ້ມູນ, ກໍ່ຈະໄດ້ຮັບການປຶກສາຫາລືຄືນວ່າຈະ ເກັບກຳຂໍ້ມູນແບບໃດ. ຈາກນັ້ນ,ລັດວິສາຫະກິດນ້ຳປະປາຂອງທ່ານຈະສັງລວມວິທີການເກັບກຳຂໍ້ມູນທີ່ປັບປຸງໃໝ່ເພື່ອ ຄວາມຖືກຕ້ອງ ແລະ ເພື່ອເປັນລາຍການຂໍ້ມູນໃໝ່ ໃຫ້ແກ່ແຜນປັບປຸງການຄຸ້ມຄອງຂໍ້ມູນຂອງລັດວິສາຫະກິດນ້ຳປະປາຂອງທ່ານເອງ.

ຂໍ້ສະເໜີ ຂໍ້ມູນ 276 ລາຍການ ສາມາດແບ່ງເປັນ 9 ກຸ່ມ, ຊຶ່ງຈະເປັນ ໂຄງຮ່າງບົດລາຍງານປະຈຳປີ ດັ່ງລຸ່ມນີ້ (ຕົວເລກຢູ່ໃນວົງເລບແມ່ນລາຍການຂໍ້ມູນ):

1. ຂໍ້ມູນໂດຍສັງເຂບ (1)
2. ການຈັດຕັ້ງ (32)
3. ພື້ນຖານໂຄງລ່າງນ້ຳປະປາ (140)
4. ການສະໜອງນ້ຳປະປາ (32)
5. ນ້ຳສູນເສຍ (9)
6. ການບໍລິການລູກຄ້າ (12)
7. ການເງິນ (38)
8. ຄຸນນະພາບນ້ຳ (5)
9. ອື່ນໆ (ຂໍ້ມູນຕິດຕໍ່) (7)

ເປົ້າໝາຍໃນຄະນະນີ້ ແມ່ນການຈັດຕັ້ງປະຕິບັດ ແລະ ສ້າງແຜນປັບປຸງການຄຸ້ມຄອງຂໍ້ມູນ, ແລະ ສ້າງບົດລາຍງານປະຈຳປີອີງຕາມຂໍ້ມູນທີ່ໄດ້ເກັບກຳ. ຂໍ້ມູນ, ແລະ ບົດລາຍງານປະຈຳປີ ແມ່ນຈະໃຊ້ເພື່ອ (1) ລາຍງານປະຈຳປີ ສຳລັບພະແນກໂຍທາທິການ ແລະ ຂົນສົ່ງ ແລະ (2) ລາຍງານ ສຳລັບຫ້ອງການຕິດຕາມນ້ຳປະປາ ໂດຍຜ່ານການຄັດຈ້ອນ ແລະ (3) ສ້າງແຜນການໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໂດຍຜ່ານການວິເຄາະ. ວິທີການຄັດຈ້ອນ ແລະ ການວິເຄາະ ແມ່ນຈະໄດ້ຮັບການສະເໜີໃນພາຍຫລັງ ໂດຍທີມງານຊ່ຽວຊານໄຈກາ.














